ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

***************

ສະພາປະຊາຊົນແຂວງຫຼວງພະບາງ

ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ

# ບົດບັນທຶກ

## ກ່ຽວກັບຄຳສະເໜີຂອງ ນາງ ບຸນທັນ ລັກປະສິດ ປັດຈຸບັນຢູ່ບ້ານ ສັງຄະໂລກ ເມືອງ ແລະ ແຂວງຫຼວງພະບາງ

ວັນທີ 2 ພຶດສະພາ 2018 ເວລາ 14 ໂມງ 00 ຕໍ່ໜ້າ ທ່ານ ພອນເລີດ ໄຊຍະນາ ສະມາຊິກສະພາປະຊາຊົນແຂວງ, ຮອງປະທານ ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງການຄວາມສະຫງົບ ແລະ ທ່ານ ເພັດສະໝອນ ທຳມຸງຄຸນ ວິຊາການຂະແໜງ ຍຸຕິທຳ ( ຜູ້ບັນທຶກ ), ໄດ້ມີ ນາງ ບຸນທັນ ລັກປະສິດ ອາຍຸ 59 ປີ, ຊົນເຜົ່າລາວ, ອາຊີບ ປະຊາຊົນ, ປັດຈຸບັນຢູ່ບ້ານ ສັງຄະໂລກ ເມືອງ ແລະ ແຂວງຫຼວງພະບາງ ໄດ້ເຂົ້າມາຫາຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ຂອງສະພາປະຊາຊົນແຂວງ ເພື່ອສະເໜີກ່ຽວກັບຄວາມບໍ່ພໍໃຈຕໍ່ຄຳຕັດສິນຂອງສານ ແລະ ຄຳພິພາກສາ ຕາມກົດໝາຍ ຕາມຄຳຮ້ອງທຸກ ສະບັບຂາເຂົ້າເລກທີ 37, ລົງວັນທີ 20 ມີນາ 2018 ກ່ຽວເລື່ອງ ຂໍຂັດແຍ່ງ ກ່ຽວກັບການຂາຍທີ່ດິນ 2 ຕອນ ຢູ່ບ້ານ ສັງຄະໂລກ ລະຫວ່າງ: ນາງ ບຸນທັນ ລັກປະສິດ ( ຜູ້ຂາຍ ) ກັບ ທ້າວ ເພັດຈຳພອນ ຊຸນດາລາ ແລະ ທ້າວ ແສງວົງຈິດ ຢາງວິໄລ ( ຜູ້ຊື້ ), ຊຶ່ງຄຳສະເໜີມີເນື້ອໃນດັ່ງນີ້:

ກ່ອນທີ່ຂ້າພະເຈົ້າຈະຂາຍທີ່ດິນໃຫ້ແກ່ ທ້າວ ເພັດຈຳພອນ ຊຸນດາລາ ນັ້ນ, ຜູ້ກ່ຽວ ແມ່ນໄດ້ມາເບິ່ງທີ່ດິນຕົວຈິງແລ້ວ, ຊຶ່ງໄດ້ມີຄວາມພໍໃຈຈຶ່ງໄດ້ຕົກລົງຊື້ທີ່ດິນຂອງຂ້າພະເຈົ້າຈຳນວນ 2 ຕອນ, ຕາມໃບຕາມດິນ ເລກທີ 217, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ 263 ຕາແມັດ ແລະ ໃບຕາເລກທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ 15.868 ຕາແມັດ, ຈາກນັ້ນຈຶ່ງໄດ້ມາເຮັດສັນຍາຊື້-ຂາຍທີ່ດິນ ສະບັບເລກທີ 01/ ສຄລ, ລົງວັນທີ 8 ມັງກອນ 2012 ເຊິ່ງມີມູນຄ່າການຊື້-ຂາຍລວມທັງໝົດ 9,600,000 bath ( ເກົ້າລ້ານຫົກແສນບາດຖ້ວນ ), ໂດຍໄດ້ຕົກລົງວິທີ່ຂອງການຊຳລະເງິນອອກເປັນ 3 ງວດ ເຊິ່ງມີກຳນົດເວລາໃນການຊຳລະໃຫ້ຄົບຖ້ວນຄື:

ງວດທີ່ 1 ວັນທີ 09/01/2012 ຈ່າຍ: 3,000,000 ບາດ.

ງວດທີ່ 2 ວັນທີ 01/01/2013 ຈ່າຍ: 3,000,000 ບາດ.

ງວດທີ່ 3 ວັນທີ 01/01/2014 ຈ່າຍ: 3,600,000 ບາດ.

ຫຼັງຈາກນັ້ນທ້າວ ເພັດຈຳພອນ ກໍ່ໄດ້ມາຊຳລະເງິນຕາມຈຳນວນ ແລະ ໄດ້ປະຕິບັດຕາມກຳນົດເວລາຂອງການຊື້-ຂາຍ, ແລ້ວຕໍ່ມາຜູ້ກ່າວໄດ້ມາຮ້ອງທວງວ່າ: ທີ່ດິນທີ່ມີການຊື້-ຂາຍກັນນັ້ນ ແມ່ນມີເນື້ອທີ່ບໍ່ຄົບຕາມເນື້ອທີ່ ທີ່ໄດ້ຕົກລົງກັນ ເຊິ່ງຜູ້ກ່າວໄດ້ມາທວງໃຫ້ຂ້າພະເຈົ້າສົ່ງເງິນຈຳນວນທີ່ເຫຼືອໄປໂດຍຄິດໄລ່ເປັນຕາແມັດ ແລະ ຂ້າພະເຈົ້າກໍ່ໄດ້ຕອບຜູ້ກ່າວ ວ່າ: ການຊື້-ຂາຍທີ່ດິນດັ່ງກ່າວ ພວກເຮົາຕົກລົງກັນຂາຍເປັນຕອນດິນ ຂ້ອຍເອງກໍ່ບໍ່ວ່າເນື້ອທີ່ແທ້ຈິງມີເທົ່າໃດ? ຖ້າບໍ່ໄດ້ໃນລາຄາຕາມທີ່ໄດ້ຕົກລົງຂາຍກັນນັ້ນ ຂ້າພະເຈົ້າແມ່ນບໍ່ຂາຍ, ຈາກນັ້ນ ທ້າວ ເພັດຈຳພອນ ຈຶ່ງໄດ້ຮ້ອງຟ້ອງຂ້າພະ ເຈົ້າໄປຍັງສານປະຊາຊົນ ຈົນທາງສານປະຊາຊົນນັ້ນໄດ້ພິຈາລະນາ ຄື:

**ສານປະຊາຊົນປະຊາຊົນແຂວງ ຫຼວງພະບາງ ( ຄະນະສານແພ່ງຂັ້ນຕົ້ນ )** ໄດ້ຕັດສິນ ສະບັບເລກທີ 012/ຂຕ.ພ, ລົງວັນທີ 14 ພະຈິກ 2016 ບອກວ່າ: ໃຫ້ຂ້າພະເຈົ້ານາງ ບຸນທັນ ສົ່ງເງິນຄ່າທີ່ດິນຈຳນວນ 5,951,273 ບາດ ຄືນໃຫ້ແກ່ ທ້າວ ເພັດຈຳພອນ, ຖ້າວ່າ ນາງ ບັນທັນ ບໍ່ສາມາດໃຊ້ແທນເງິນຈຳນວນ 5,951,273 ບາດ ແມ່ນໃຫ້ ທ້າວ ເພັດຈຳພອນ ປະກາດຂາຍທີ່ດິນພ້ອມດ້ວຍເຮືອນ ແລະ ໃຫ້ເອົາເງິນຢູ່ເລກບັນຊີເງິນຝາກ ຢູ່ທະນາຄານການຄ້າຕ່າງປະເທດລາວມະຫາ ຊົນ ສາຂາແຂວງຫຼວງພະບາງ ທີ່ອອກຊື່ນາງ ບັນທັນ ມາໃຊ້ແທນໃຫ້ແກ່ ທ້າວ ເພັດຈຳພອນ ໃຫ້ຄົບຕາມຈຳນວນ 5,951,273 ບາດ ແຕ່ຖ້າຫາກຍັງບໍ່ພໍເທົ່າໃດ ແມ່ນໃຫ້ ນາງ ບັນທັນ ຊອກມາໃຊ້ທົດແທນໃຫ້ຄົບ, ແຕ່ຖ້າຫາກວ່າເຫຼືອ ແມ່ນໃຫ້ສົ່ງຄືນແກ່ນາງ ບັນທັນ.

**ສານປະຊາຊົນພາກເໜືອ ( ຄະນະສານແພ່ງຂັ້ນອຸທອນ )** ພິພາກສາ ຕາມຄຳຕັດສິນ ສະບັບເລກທີ 005/ອທ.ພ, ລົງວັນທີ 31 ມີນາ 2017 ວ່າ: ປ່ຽນແປງຄຳຕັດສິນ ສະບັບເລກທີ 012/ຂຕ.ພ, ລົງວັນທີ 14 ພະຈິກ 2016 ຂອງສານປະຊາຊົນແຂວງ ຫຼວງພະບາງ ບາງສ່ວນ ບອກວ່າ: ໃຫ້ ທ້າວ ເພັດຈຳພອນ ເສັຍຄ່າອາກອນຂອງລັດ 2 % ຂອງມູນຄ່າ 782 ບາດ ທີ່ຮ້ອງຟ້ອງເກີນ ແລະ ໃຫ້ຈຳເລີຍເສຍອາກອນຂອງລັດ 2 % ຂອງມູນຄ່າ 5,951,273 ບາດ ທີ່ເສຍຄະດີໂດຍໃຫ້ເສັຍເປັນເງິນກີບ, ແລ້ວໃຫ້ລົບລ້າງສັນຍາຊື້-ຂາຍ ສະບັບເລກທີ 01/ສຄລ, ລົງວັນທີ 8 ມັງກອນ 2012 ບາງສ່ວນ ລົບລ້າງໃນສ່ວນທີ່ເປັນໂມຄະ ຄື: ເນື້ອທີ່ດິນ 1 ເຮັກຕາເທົ່າກັບ 10,000 ຕາແມັດ ຖິ້ມ ພ້ອມທັງລົບລ້າງໃບຕາດິນ ເລກທີ 223, ລົງວັນທີ 7 ກຸມພາ 2014 ມີເນື້ອທີ່ 1 ເຮັກຕາ 5,868 ຕາແມັດ ອອກຊື່ ທ້າວ ເພັດຈຳພອນ ແລະ ທ້າວ ແສງວົງຈິດ ຖິ້ມ ແລ້ວມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຫຼວງພະບາງ ອອກໃບຕາດິນໃໝ່ ທີ່ມີເນື້ອທີ 5,868 ຕາແມັດ ໃຫ້ແກ່ ທ້າວ ເພັດຈຳພອນ ແລະ ທ້າວ ແສງວົງຈິດ ນອກນັ້ນ ແມ່ນຍັ້ງຢືນເອົາຕາມຄຳຕັດສິນຂອງສານຂັ້ນຕົ້ນ.

ສານປະຊາຊົນສູງສຸດ ( ຄະນະສານຂັ້ນລົບລ້າງ ) ພິພາກສາ ສະບັບເລກທີ 63/ລລ.ລ, ລົງວັນທີ 25 ຕຸລາ 2017 ພິພາກສາ: ຢັ້ງຢືນຕາມຄຳພິພາກສາ ສະບັບເລກທີ 005/ອທ.ພ, ລົງວັນທີ 31 ມີນາ 2017 ຂອງສານປະຊາຊົນພາກເໜືອຂັ້ນອຸທອນທັງໝົດ.

ຕໍ່ກັບຄຳຕັດສິນ ແລະ ຄຳພິພາກສາຂອງສານ ແຕ່ຂັ້ນຕົ້ນຈົນຮອດຂັ້ນລົບລ້າງ, ຂ້າພະເຈົ້າບໍ່ພໍໃຈ ເນື່ອງຈາກວ່າ ມັນໄດ້ເຮັດໃຫ້ຂ້າພະເຈົ້າເປັນຜູ້ໄດ້ຮັບຄວາມເສັຍປະໂຫຍດແຕ່ຝ່າຍດຽວ ດັ່ງນັ້ນ, ຈຶ່ງສະເໜີຕໍ່ທາງສະພາປະຊາຊົນແຂວງ ຫຼວງພະບາງ ວ່າ:

1. ການທີ່ຂ້າພະເຈົ້າ ແລະ ທ້າວ ເພັດຈຳພອນ ຊື້-ຂາຍ ທີ່ດິນນຳກັນແມ່ນເຮັດຂຶ້ນດ້ວຍຄວາມພໍໃຈທັງສອງຝ່າຍ, ກ່ອນທີ່ຈະມີການຊື້-ຂາຍ ທ້າວ ເພັດຈຳພອນ ກໍ່ໄດ້ເຂົ້າໄປສຳຫຼວດ ກວດກາເຂດແດນດ້ວຍສາຍຕາ ແລ້ວຈຶ່ງພໍໃຈຕົກລົງ ຊື້-ຂາຍ ທີ່ດິນນຳຂ້າພະເຈົ້າ, ສ່ວນກຳນົດເວລາຂອງການຊຳລະເງິນກໍ່ເປັນເວລາ 3 ປີ ຈຶ່ງຄົບຖ້ວນ, ຖ້າຜູ່ກ່ຽວບໍ່ພໍໃຈ ເປັນຫຍັງຈຶ່ງບໍ່ຮ້ອງທວງແຕ່ຕອນບໍ່ໄດ້ຊຳລະເງິນຄົບ ແລະ ບໍ່ທັນໂອນໃບຕາດິນພຸ້ນ.

2.ການທີ່ເນື້ອທີ່ດິນບໍ່ຄົບຖ້ວນ ຕາມການຕົກລົງຊື້-ຂາຍນຳກັນ ບໍ່ແມ່ນຄວາມຜິດຂອງຂ້າພະເຈົ້າ, ຂ້າພະເຈົ້າເອງ ແລະ ທ້າວ ເພັດຈຳພອນ ກໍ່ບໍ່ຮູ້ວ່າເນື້ອທີ່ຕົວຈິ່ງຂອງທີ່ດິນມີເທົ່າໃດ? ສ່ວນການຜິດພາດກ່ຽວກັບເນື້ອທີ່ດິນ ບໍ່ກົງກັບໃບຕາດິນ ຂ້າພະເຈົ້າເອງກໍ່ບໍ່ສາມາດຮູ້ໄດ້, ຄວາມຜິດທັງໝົດມັນແມ່ນເຈົ້າໜ້າທີ່ທີ່ກ່ຽວຂ້ອງຜູ້ທີ່ມີສິດອຳນາດຂອງລັດເປັນຜູ້ເຮັດຂຶ້ນ, ສະນັ້ນ ການທີ່ສານປະຊາຊົນໄດ້ພິຈາລະນາວ່າ: ສັນຍາຊື້-ຂາຍ ເປັນໂມຄະບາງສ່ວນແມ່ນບໍ່ຖືກຕ້ອງ, ຖ້າຈະໃຫ້ເປັນໂມຄະກໍ່ຕ້ອງເປັນໂມຄະທັງໝົດ ຄືໃຫ້ຜູ້ກ່ຽວສົ່ງທີ່ດິນຄືນແກ່ຂ້າພະເຈົ້າທັງໝົດ ແລະ ຂ້າພະເຈົ້າກໍ່ຈະສົ່ງເງິນຄືນແກ່ຜູ້ກ່ຽວທັງໝົດ, ເນື່ອງຈາກວ່າ ການທີ່ເນື້ອທ່ດິນໃນໃບຕາດິນ ແລະ ເນື້ອທີ່ຕົວຈິງບໍ່ກົງກັນນັ້ນ ຂ້າພະເຈົ້າເອງກໍ່ບໍ່ສາມາດຮູ້ໄດ້ເພາະຂ້າພະເຈົ້າບໍ່ມີສິດໃນການເຮັດໃບຕາດິນດ້ວຍຕົນເອງ, ຄວາມຜິດທັງໝົດທີ່ເກີດຂຶ້ນແມ່ນຍ້ອນພະນັກງານຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນຜູ້ເຮັດຂຶ້ນ, ຜົນສະທ້ອນທັງໝົດແມ່ນເກີດມາຈາກການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດທີ່ຂາດຄວາມຮັບຜິດຊອບ, ສະນັ້ນ ຈະມາໃຫ້ຂ້າພະເຈົ້າສົ່ງເງິນຄືນ ໂດຍຄິດໄລ່ຕາມຕາແມັດຂອງລາຄາຊື້-ຂາຍນັ້ນແມ່ນບໍ່ມີຄວາມຍຸຕິທຳ ເພາະເຮັດໃຫ້ຂ້າພະເຈົ້າໄດ້ຮັບຄວາມເສັຍປະໂຫຍດພຽງຝ່າຍດຽວ.

3. ໃນການຊື້-ຂາຍດັ່ງກ່າວ ຖ້າທຽບໃສລາຄາໃນໄລຍະນັ້ນ ຕໍ່ກັບທີ່ດິນທັງ 2 ຕອນ ຂອງຂ້າພະເຈົ້າໃນລາຄາຊື້-ຂາຍ ເປັນເງິນ 3 ລ້ານກ່ວາບາດນັ້ນ ຂ້າພະເຈົ້າແມ່ນບໍ່ສາມາດຂາຍໃຫ້ຜູ້ກ່ຽວໄດ້ ແລະ ການຊື້-ຂາຍໃນວັນນັ້ນຫາກບໍ່ໄດ້ລາຄາເທົ່າທີ່ຕົກລົງຊື້-ຂາຍກັນ ຂ້າພະເຈົ້າກໍ່ບໍ່ສາມາດຂາຍໃຫ້ຜູ້ກ່ຽວໄດ້, ໃນກໍລະນີດັ່ງກ່າວຖ້າຫາກສານມີຄວາມຍຸຕິທຳແທ້ ສານຕ້ອງລົງກວດກາເບິ່ງຕົວຈິ່ງ ວ່າທີ່ດິນດັ່ງກ່າວນັ້ນ ຖ້າທຽບໃສ່ມູນຄ່າຕົວຈິ່ງເວລານັ້ນ ແລະ ປັດຈຸບັນລາຄາ 3 ລ້ານກ່ວາບາດແມ່ນໃຜຈະມາຂາຍໃຫ້ພວກເພິ່ນ, ຕໍ່ກັບບັນຫາດັ່ງກ່າວຂ້າພະເຈົ້າຂໍໃຫ້ທາງສະພາໄດ້ພິຈາລະນາດ້ວຍ.

4.ສະເໜີ ມາຍັງສະພາປະຊາຊົນແຂວງ ຫຼວງພະບາງ ໃຫ້ພິຈາລະນາ ເພື່ອຂໍຣື້ຟື້ນຄະດີດັ່ງກ່າວໄປຍັງອົງການທີ່ກ່ຽວຂ້ອງຂອງລັດ ແລະ ໃຫ້ພິພາກສາຄືນໃໝ່ໂດຍໃຫ້ລຶບລ້າງ ສັນຍາຊື້-ຂາຍ ທີ່ເປັນໂມຄະທັງໝົດ ແລ້ວໃຫ້ທ້າວ ເພັດຈຳພອນ ສົ່ງທີ່ດິນຄືນແກ່ຂ້າພະເຈົ້າ, ແລ້ວຂ້າພະເຈົ້າກໍ່ສົ່ງເງິນຄືນໃຫ້ແກ່ ທ້າວ ເພັດຈຳພອນ ແລ້ວກໍ່ໃຫ້ແລ້ວແກ່ກັນ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ ເພື່ອເປັນບ່ອນອີງໃນການລາຍງານຂັ້ນແກ່ເທິງຊາບ ແລະ ມີທິດຊີ້ນຳໃນການຈັດຕັ້ງປະຕິບັດຕໍ່ໜ້າ.

**ສະພາປະຊາຊົນແຂວງຫຼວງພະບາງ**

**ຮອງປະທານ ຄະນະກຳມະການຍຸຕິທຳແລະປກຊ-ປກສ** | **ຜູ້ບັນທຶກ** | **ຜູ້ສະເໜີ**

ພອນເລັດ ໄຊຍະນາ

Phonelеut XAYANA